ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈໍາ

ເລກທີ 53 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 23/08/22

# ມະຕິ

## ຂອງຄະນະປະຈໍາສະພາແຫ່ງຊາດ

## ວ່າດ້ວຍ ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ

– ອີງຕາມລັດຖະທໍາມະນູນ ແຫ່ງ ສປປ ລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 5;

– ອີງຕາມກົດໝາຍວ່າດ້ວຍການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016 ມາດຕາ 13;

– ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 33 ຂໍ້ 3.1;

– ອີງຕາມກົດໝາຍວ່າດ້ວຍການສ້າງນິຕິກໍາ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021 ມາດຕາ 124 ແລະ 125.

ເພື່ອຮັບປະກັນໃຫ້ວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ມີຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ.

## ຄະນະປະຈໍາສະພາແຫ່ງຊາດ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ມະຕິສະບັບນີ້ ກໍານົດ ຫຼັກການ, ລະບຽບການ, ເນື້ອໃນ, ຮູບການ ແລະ ຂັ້ນຕອນ ກ່ຽວກັບວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງອົງການລັດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ

ດຳເນີນຢ່າງເປັນລະບົບຕໍ່ເນື່ອງ, ມີປະສິດທິພາບ, ປະສິດທິຜົນ ແນໃສ່ເຮັດໃຫ້ກົດໝາຍທີ່ປະກາດໃຊ້ແລ້ວ ໄດ້ຮັບການຕິດຕາມກວດກາ ແລະ ປະເມີນຜົນ ຢ່າງຖືກຕ້ອງ ແລະ ເຂັ້ມງວດ.

**ມາດຕາ 2 ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ**

ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແມ່ນ ການຕິດຕາມກວດກາວຽກງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງອົງການລັດ.

**ມາດຕາ 3 ຫຼັກການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ**

ໃນການເຄື່ອນໄຫວວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ;
2. ຮັບປະກັນຄວາມໂປ່ງໃສ, ຍຸຕິທຳ, ເປີດເຜີຍ;
3. ປະສານສົມທົບກັບອົງການລັດ ທີ່ມີໜ້າທີ່ປະເມີນຜົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
4. ມີຄວາມຊັດເຈນ ແລະ ທັນເວລາ;
5. ມີສ່ວນຮ່ວມຂອງປະຊາຊົນ ແລະ ສື່ມວນຊົນ.

## ໝວດທີ 2
## ຄວາມຮັບຜິດຊອບໃນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ

**ມາດຕາ 4 ຄວາມຮັບຜິດຊອບໃນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ**

ຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໂດຍມອບໃຫ້ກຳມາທິການກົດໝາຍ ເປັນໃຈກາງປະສານສົມທົບກັບບັນດາກຳມາທິການຂອງສະພາແຫ່ງຊາດ.

**ມາດຕາ 5 ຄວາມຮັບຜິດຊອບຂອງກຳມາທິການກົດໝາຍ**

ໃນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ກຳມາທິການກົດໝາຍ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ສ້າງແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ປະຈຳປີ ຫຼື ເປັນແຕ່ລະໄລຍະ ເພື່ອສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;

2. ເປັນໃຈກາງປະສານສົມທົບກັບກຳມາທິການຂອງສະພາແຫ່ງຊາດ ກ່ຽວກັບວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ຕິດຕາມກວດກາ, ຊຸກຍູ້ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດທີ່ຕົນຮັບຜິດຊອບ;

3. ເຂົ້າຮ່ວມໃນການຕິດຕາມກວດກາ, ຊຸກຍູ້ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງຂະແໜງການ ໃນຂົງເຂດທີ່ກຳມາທິການອື່ນ ຂອງສະພາແຫ່ງຊາດ ຮັບຜິດຊອບ;

4. ສະຫຼຸບ, ສັງລວມ ວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ເພື່ອລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ.

### ມາດຕາ 6 ຄວາມຮັບຜິດຊອບຂອງກຳມາທິການອື່ນ ຂອງສະພາແຫ່ງຊາດ

ໃນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ກຳມາທິການອື່ນ ຂອງສະພາແຫ່ງຊາດ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ປະກອບຄຳເຫັນໃສ່ແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ປະຈຳປີ ຫຼື ເປັນແຕ່ລະໄລຍະ;

2. ຕິດຕາມກວດກາ, ຊຸກຍູ້ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດທີ່ຕົນຮັບຜິດຊອບ;

3. ສະຫຼຸບ, ສັງລວມ ວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງຂະແໜງການ ໃນຂົງເຂດທີ່ຕົນຮັບຜິດຊອບ ໂດຍສົມທົບກັບກຳມາທິການກົດໝາຍ.

## ໝວດທີ 3
## ເນື້ອໃນ, ຂັ້ນຕອນ, ຮູບການ ແລະ ຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ

### ມາດຕາ 7 ເນື້ອໃນຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ

ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການໂຄສະນາ ເຜີຍແຜ່ ແລະ ຍົກສູງສະຕິເຄົາລົບກົດໝາຍ;

2. ການສ້າງ ຫຼື ກົນໄກການຈັດຕັ້ງປະຕິບັດກົດໝາຍ ລວມທັງການຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍ ເປັນອັນລະອຽດ;

3. ການກວດກາກົດໝາຍໃນບາງມາດຕາ ທີ່ມີບາງເນື້ອໃນຂັດກັນ, ເປັນຊ່ອງວ່າງ, ມີຜົນກະທົບ ຫຼື ສາເຫດທີ່ພາໃຫ້ບໍ່ສາມາດຈັດຕັ້ງປະຕິບັດໄດ້.

### ມາດຕາ 8 ຂັ້ນຕອນຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ

ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ສ້າງແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ;

2. ດຳເນີນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ;

3. ລາຍງານ ແລະ ພິຈາລະນາຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ.

### ມາດຕາ 9 ຮູບການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ

ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ປະຕິບັດຕາມຮູບການ ດັ່ງນີ້:

1. ຮູບການເກັບກຳຂໍ້ມູນຕົວຈິງ;

2. ຮູບການເກັບກຳຂໍ້ມູນດ້ວຍການສອບຖາມເປົ້າໝາຍ;

3. ຮູບການຈັດກອງປະຊຸມ.

ລາຍລະອຽດຂອງຂັ້ນຕອນ ແລະ ຮູບການ ໄດ້ກຳນົດໄວ້ໃນຄູ່ມືການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ.

**ມາດຕາ 10 ຜົນການຕັດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ**

ພາຍຫຼັງກອງປະຊຸມສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍແລ້ວ ໃຫ້ອົງການລັດທີ່ກ່ຽວຂ້ອງ ນຳໄປປັບປຸງແກ້ໄຂ ຕາມມະຕິກອງປະຊຸມສະພາແຫ່ງຊາດ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 11 ການຈັດຕັ້ງປະຕິບັດ**

ກຳມາທິການຂອງສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ຄະນະປະຈຳສະພາແຫ່ງຊາດ**

**ປະທານ**

ປອ ໄຊສົມພອນ ພົມວິຫານ